ສົມ ! ເຮວຸ່ມ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ນະຄອນຫລວງວຽງຈັນ, ເລກທີ ....../ຫຄຊກລ.ກກ

# ບົດບັນທຶກ

## ກອງປະຊຸມກຸ່ມວິຊາການ ສຳຫຼວດ ແລະ ເກັບກູ້ ລບຕ ປະຈຳໄຕມາດ II ປີ 2023

ກອງປະຊຸມກຸ່ມວິຊາການ ສຳຫຼວດ ແລະ ເກັບກູ້ ລບຕ ທີ່ໄດ້ໄຂຂຶ້ນໃນເວລາ 08:30 ຫາ 16:00 ໃນວັນທີ 26 ກໍລະກົດ ປີ 2023 ທີ່ຫ້ອງປະຊຸມ Balloon Landmark Hotel ໂດຍເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ ແລະ ມີຜູ້ເຂົ້າຮ່ວມຄື:

### I. ຜູ້ເຂົ້າຮ່ວມ

1. ຫ້ອງການ ຄຊກລ: ຮອງຫົວໜ້າຫ້ອງການ, ຫົວໜ້າ, ວິຊາການ ໜ່ວຍງານຄຸ້ມຄອງການສຳຫລວດ ແລະ ເກັບກູ້, ຕາງໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ, ຕາງໜ້າໜ່ວຍງານຄຸ້ມຄອງຖານຂໍ້ມູນ, ຕາງໜ້າໜ່ວຍງານປະຊາສຳພັນ ຫ້ອງການ ຄຊກລ ແລະ ພະນັກງານຝຶກຫັດ ລວມ 8 ທ່ານ.

2. ຕາງໜ້າຈາກ 6 ອົງການມະນຸດສະທຳ: ໂຄງການເກັບກູ້ລະເບີດແຫ່ງຊາດ 2 ທ່ານ, ອົງການເອັນພີເອ 2 ທ່ານ, ອົງການຮາໂລທຣັສ 2 ທ່ານ, ອົງການເອັຈໄອ 2 ທ່ານ, ອົງການແມັກປະຈຳ ສປປ ລາວ 3 ທ່ານ, ແລະ ກອງກວດກູ້ເພື່ອມະນຸດສະທຳກອງທັບ 2 ທ່ານ ລວມ: 13 ທ່ານ.

3. ຈາກອົງການສະຫະປະຊາຊາດ 3 ທ່ານ;

4. ຕາງໜ້າຜູ້ໃຫ້ທຶນຈາກສະຖານທູດ ສ. ອາເມລິກາ 1 ທ່ານ;

5. ບໍລິສັດ ເທທາເທັກ(Tt) 1 ທ່ານ;

6. ຈາກ 19 ບໍລິສັດເກັບກູ້ລະເບີດທັງພາຍໃນ ແລະ ຕ່າງປະເທດ ລວມ: 6 ທ່ານ; (LXML, Milsearch and Aron HAYES)

### II. ຈຸດປະສົງ

ອົງການ ສປຊ ໄດ້ໃຫ້ຄວາມສຳຄັນໃນການເສື່ອມສານ ແລະ ບົດບາດຍິງ-ຊາຍໃນຂະແໜງການ ໂດຍສະເພາະໃນກິດຈະກຳສຳຫຼວດ ແລະ ເກັບກູ້ ລບຕ ໂດຍແຕ່ງຕັ້ງຜູ້ປະສານງານໂດຍແມ່ນສະຫາຍສິນທະລາ ພົມມະວົງ ຮອງຫົວໜ້າໜ່ວຍງານຄຸ້ມຄອງສຳຫຼວດ ແລະ ເກັບກູ້ ແລະ ນາງ.....ຈາກອົງການ ຮາໂລທຣາດສ໌ ,

- ປຶກສາຫາລື, ແລກປ່ຽນຂໍ້ມູນ, ລາຍງານຄວາມຄືບໜ້າ ການສຳຫຼວດ ແລະ ເກັບກູ້ ລບຕ ໄຕມາດ 3 , ທົບທວນຄືນບາງບັນຫາທີ່ຍັງຄ້າງຄາໃນໄຕມາດ 2 ປີ 2023 , ປຶກສາຫາລືບັນຫາກ່ຽວກັບ ການເພີ່ມຕົວ

ເລກພື້ນທີ່ກວດກູ້, ຊອກຫາວິທີການ ແລະ ຂັ້ນຕອນໃນການກວດກູ້ ໃຫ້ໄວຂຶ້ນ ທັງຮັບປະກັນຄຸນນະພາບ; ການແບ່ງພື້ນທີ່ CHA ໃຫ່ຍ, ເປັນຫຼາຍພື້ນທີ່ນ້ອຍ, ເພື່ອສະດວກໃນການຈັດລໍາດັບໜ້າວຽກ ແລະ ກວດກາຄຸນນະພາບ.

- ປຶກສາຫາລື ວິທີການກວດກູ້ເນື້ອທີ່ໃຫ້ໄວຂຶ້ນ ທັງຮັບປະກັນຄຸນນະພາບ(ສືບຕໍ່ປຶກສາຫາລື)
- ກວດກູ້ ພື້ນທີ່ພັດທະນາ ບໍ່ແມ່ນພື້ນທີ່ CHA (Clearance FDA, Non CHA Clearance)
- ການປົດປ່ອຍພື້ນທີ່ ດ້ວຍການສໍາຫຼວດດ້ານວິຊາການ(Land release by TS (Green box)
- ທົບທວນຄືນການປັກຫຼັກໝາຍ ແລະ ແຈ້ງເຕືອນ ຂອບເຂດສໍາຫຼວດສໍາເລັດ ແລະ ຢັ້ງຢືນວ່າເປັນພື້ນທີ່ອັນລາຍ(CHA);
- ສະເໜີການນໍາທົດລອງນໍາໃຊ້ປຶ້ມຄູ່ມື ລບຕ ແບບເກົ່າ ເພື່ອປ່ຽນແທນມານໍາໃຊ້ HI-EO ເອເລັກໂທຣນິກ ແລະ ອອນລາຍ;
- ລາຍງານຄວາມຄືບໜ້າໃນການປັບປຸງມາດຖານແຫ່ງຊາດ ແລະ ບຸລິມະສິດການກວດກູ້ ລບຕ ແລະ ບັນຫາອື່ນໆ ທີ່ພົວພັນກັບກອງປະຊຸມວິຊາການຄຸນວຸດທິພະນັກງານ ຢູ່ ອົງການປະຕິບັດງານ

- ອົງການ ເອັສໄອ ນໍາສະເໜີ ຄວາມແຕກຕ່າງລະຫ່ວາງ ຟິວ 57 ມມ US # China ຄວາມແຕກຕ່າງ ແລະ ວິທີປ້ອງກັນ
- ກວດກູ້ ລບຕ ເພື່ອສະໜັບສະໜູນໃຫ້ແກ່ໂຄງການພັດທະນາຂອງລັດຖະບານ
- ແຜນປະຕິບັດງານສໍາຫຼວດ-ກວດກູ້ ລບຕ ປີ 2024

## III. ເນື້ອໃນກອງປະຊຸມ

ກອງປະຊຸມໄດ້ໄຂຂຶ້ນຢ່າງເປັນທາງການໃນເວລາ 08:30ໂມງ. ອົງການສະຫະປະຊາຊາດອົງການ ສປຊ ໄດ້ນໍາສະເໜີຄວາມສໍາຄັນໃນການເສື່ອມສານບົດບາດຍິງ-ຊາຍໃນຂະແໜງການ ລບຕ ໂດຍສະເພາະແມ່ນຈະເອົາວຽກງານນີ້ສອດເຂົ້າໃນກິດຈະກໍາສໍາຫຼວດ ແລະ ເກັບກູ້ ລບຕ ໂດຍແຕ່ງຕັ້ງຜູ້ປະສານງານ ແລະ ຮັບຜິດຊອບວຽກ ເພດຊາຍແມ່ນຕົກລົງແຕ່ງຕັ້ງທ່ານ ສີນທະລາ ພົມມະວົງ ໜ່ວຍງານຄຸ້ມຄອງ ສໍາຫຼວດ ແລະ ເກັບກູ້ ນາງ.....ຈາກອົງການ ຮາໂລທຣາດສ໌, ຫຼັງຈາກນັ້ນ ຈະໄດ້ຝຶກອົບຮົມໃຫ້ ແລະ ສ້າງແຜນດໍາເນີນວຽກດັ່ງກ່າວຕາມແຜນທີ່ກໍານົດໄວ້ໃນຂະແໜງການ. ຈາກນັ້ນ ກອງປະຊຸມໄດ້ຍົກຫຼາຍປາເດັນຂຶ້ນສະເໜີໃນກອງປະຊຸມ: ສໍາລັບວຽກກວດກູ້ ຕົວເລກສູ້ຊົນ 10.000 ຮຕ ສໍາລັບການຮ່າງເອກະສານກ່ຽວກັບບຸລິມະສິດການກວດກູ້ CHA ແມ່ນໃຊ້ເວລາດົນສົມຄວນ ມາຮອດປະຈຸບັນບໍ່ທັນສາມາດເອົາມານໍາໃຊ້ໄດ້ເພາະວ່າ ຍັງຕ້ອງໄດ້ທົບທວນ, ສັງລວມແຜນບຸລິມະສິດມະຫາພາກຈາກບັນດາກະຊວງທັງໝົດ ແລະ ແຜນຂອງແຂວງ, ເມືອງ, ບ້ານ ແລະ ອົງການປະຕິບັດງານ. ຈາກນັ້ນ, ກອງປະຊຸມໄດ້ດໍາເນີນຕາມວາລະທີ່ກໍານົດໄວ້ດັ່ງລຸ່ມນີ້:

- ໜ່ວຍງານຄຸ້ມຄອງການສໍາຫຼວດ ແລະ ເກັບກູ້ ທວນຄືນກອງປະຊຸມວິຊາການກ່ຽວກັບການສໍາຫຼວດ ກວດກູ້ ລບຕ ໃນໄຕມາດ 2 ປີ 2023.

- ກອງປະຊຸມໄດ້ຍົກເອົາຕົວເລກແບ່ງປັນໃຫ້ແຕ່ລະແຂວງເພື່ອກວດກູ້ ລບຕ ປີ 2023 ໃຫ້ແຕ່ລະອົງການຮັບຜິດຊອບ ໂດຍອີງໃສ່ຊັບພະຍາກອນທີ່ມີໃນປະຈຸບັນ ແລະ ຄາດວ່າຈະໄດ້ຮັບທຶນໃນຕໍ່ໜ້າ, ແຕ່ຄວາມເປັນຈິງແລ້ວ ມີຫຼາຍແຂວງບໍ່ສາມາດເຄື່ອນໄຫວໄດ້ ຍ້ອນບໍ່ມີທຶນສະໜັບສະໜູນ ເຊັ່ນ: ໂຄງການເກັບກູ້ລະເບີດແຫ່ງຊາດ : ແຂວງຫຼວງພະບາງ, ຫົວພັນ, ເຊກອງ ແລະ ຈໍາປາສັກ ຕົວເລກຄາດໝາຍສູ້ຊົນໃນການກວດກູ້ ລບຕ 10.000 ຮຕ/ປີ ຄາດວ່າອາດຈະບໍ່ບັນລຸຕາມຄາດໝາຍທີ່ວາງໄວ້.

- ກອງປະຊຸມໄດ້ປຶກສາຫາລືກ່ຽວກັບການກວດກູ້ ລບຕ ເຫັນວ່າຕົວເລກຫຼຸດລົງ, ກົງກັນຂ້າມມີທີມ ແລະ ຊັບພະຍາກອນເພີ່ມຂຶ້ນໃນຫຼາຍອົງການ, ສະນັ້ນ, ຈະໄດ້ພ້ອມກັນຊອກຫາວິທີ ແລະ ເຕັກນິກວິຊາການມາຊ່ວຍເພື່ອໃຫ້ການກວດກູ້ໄວຂຶ້ນ,ມີການສົມທຽບກັນໃນການປະຕິບັດວຽກງານຂອງແຕ່ລະອົງການ, ບາງອົງການມີມາດຕະຖານການເຮັດວຽກຄືກັນ ສະພາບພື້ນທີ່ເກັບກູ້ຄ້າຍ ຄືກັນ ແຕ່ຜົນໄດ້ຮັບຕໍ່າ ຄ່າໃຊ້ຈ່າຍສູງ. ຕໍ່ກັບບັນຫາດັ່ງກ່າວໃນອະນາຄົດ ຈະມີທີມງານວິຊາການຈາກ ຄຊກລ ຈະເຮັດວຽກຮ່ວມກັບແຕ່ລະອົງການເພື່ອຊອກຫາເຫດຜົນ ແລະ ວິທີແກ້ໄຂ.
- ຕາງໜ້າອົງການປະຕິບັດງານຂຶ້ນນຳສະເໜີ ຜົນສຳເລັດວຽກງານປະຕິບັດງານໃນໄຕມາດທີ 2 ປີ 2023 ຕໍ່ກອງປະຊຸມ ລວມມີ ສິ່ງທ້າທາຍ ແລະ ຂໍ້ສະເໜີໃນການປະຕິບັດງານໃນໄລຍະຜ່ານມາ:

**ໂຄງການເກັບກູ້ລະເບີດແຫ່ງຊາດ:**

ແຜນການປະຈຳປີ 2023 ວາງໄວ້ດຳເນີນການປະຕິບັດງານຢູ່ 9 ແຂວງ ລວມມີ 119 ທີມ, ເຄື່ອນໄຫວຕົວຈິງ 83 ທີມ ,ຢຸດຊົ່ວຄາວ 36 ທີມ, ໃນນີ້ທີມງານກວດກູ້ 80 ທີມ ຢຸດວຽກ 20 ທີມ ໃນ 5 ແຂວງ . ຊຶ່ງບໍ່ສາມາດປະຕິບັດຕົວເລກກວດກູ້ໄດ້ຕາມແຜນທີ່ວາງໄວ້. ສາຍເຫດ: ຫຼາຍແຂວງຢຸດວຽກ ບໍ່ມີທຶນສະໜັບສະໜູນ, ບາງສະໜາມການກວດກູ້ຊັກຊ້າຍ້ອນສິ່ງກີດຂວາງເຊັ່ນ: ຂວາຍຂີ້ກະເດືອນ, ຂອນໄມ້ໃຫຍ່,ໂພນປວກ, ຮ່ອງນໍ້າທີ່ເຈື່ອນເຊາະເລິກ ແລະ ສິ່ງກີດຂວາງອື່ນໆ. ນອກຈາກນີ້ ຄກລ ຍັງໄດ້ທົດລອງໂຄງຮ່າງຄຸນນະພາບຂອງການປະຕິບັດງານຢູ່ໃນແຂວງຄຳມ່ວນໄລຍະເວລາ 6 ເດືອນ, ເພີ່ມການກວດກາຄຸນນະພາບ QCສະໜາມທີ່ເກັບກູ້ແລ້ວຈາກ 2%ຂຶ້ນເປັນ 5%,ສຳເລັດການດຳເນີນການທົດລອງທີມງານຕັດຫຍ້າດ້ວຍແຮງງານຄົນ ຈຳນວນ 4 ທີມ ເປັນເວລາ 6 ເດືອນ ຢູ່ ຄກລ ແຂວງ ສະຫວັນນະເຂດ ແລະ ກຳລັງສືບຕໍ່ຈັດຕັ້ງປະຕິບັດ, ການປ່ຽນແປງ ຈາກການກວດກູ້ຕາມການສະ ເໜີມາເປັນການກວດກູ້ໂດຍອີງໃສ່ຈຸດຫຼັກຖານ ລບຕ ລູກຫວ່ານ ເຫັນວ່າ ພົບ ລບຕ ເພີ່ມຂຶ້ນຫຼາຍ ແລະ ນຳໃຊ້ດິນລະເບີດຫຼາຍຂຶ້ນ ແລະ ງົບປະມານເພີ່ມຂຶ້ນ,ສ້າງ ແລະ ພັດທະນາລະບຽບການເກັບກູ້ Non-CHA

ສິ່ງທ້າທາຍ:

- ເຈົ້າຂອງດິນ ເຈົ້າຂອງດິນ / ຜູ້ນຳໃຊ້ດິນ ສ່ວນຫຼາຍ ແມ່ນບໍ່ໄດ້ໃຫ້ຄວາມຮ່ວມມືໃນການອະນາໄມຖາງປ່າ
- ການເກັບກູ້ພື້ນທີພັດທະນາທີ່ບໍ່ນອນໃນຂອບເຂດການສຳຫຼວດ TS ແລະ ບໍ່ນອນໃນພື້ນທີ່ CHA
- ການສຳຫຼວດ TS ໃຫ້ສຳເລັດເປັນບ້ານ ແມ່ນມີຄວາມທ້າທາຍຫຼາຍ
- ການສຳຫຼວດ TS ໃຫ້ກວມເອົາພື້ນທີ່ຕົກໝົດບ້ານແມ່ມີຄວາມທ້າທາຍຫຼາຍ
- ການສຳຫຼວດ TS ໃຫ້ກວມເອົາພື້ນທີ່ຕົກຄ້າງຂອງລະເບີດລູກຫວ່ານທັງໝົດຕາມລະບຽບການສຳຫຼວດ ຢູ່ບາງສະໜາມ ແມ່ນບໍ່ສາມາດປິດການສຳຫຼວດໄດ້ຕາມລະບຽບການ
- ການວາງແຜນກວດກູ້ກວມເອົາພື້ນທີ CHAທີ່ກວ້າງໃຫຍ່ແມ່ນມີຄວາມຫຍຸ້ງຍາກຫຼາຍ
- ການກວດກູ້ ພື້ນທີ່ພັດທະນາ ບາງສະຖານທີ່ມີເອກະສານຄົບຖ້ວນ ແຕ່ບໍ່ມີທຶນເກັບກູ້ ເອົາເຂົ້າແຜນໄດ້ບໍ?
- ສປຊ ເຄີຍຖາມ ຄກລ ຄືມີແຕ່ກວດກູ້ ພື້ນທີ່ກະສິກຳ ພື້ນທີ່ພັດທະນາຄືບໍ່ມີ, ເຫດຜົນ ຜູ້ໃຫ້ທຶນລະບຸ ກວດກູ້ແຕ່ CHA , ສ່ວນພື້ນທີ່ພັດທະນາບໍ່ແມ່ນພື້ນທີ່ CHA ຈຶ່ງບໍ່ໄດ້ກວດກູ້.
- ວຽກງານທຳລາຍ ບາງຄັ້ງແມ່ນບໍ່ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ຍ້ອນບໍ່ມີທີມທຳລາຍສະເພາະ ສ່ວນຫຼາຍແມ່ນໃຊ້ ທີມກວດກູ້ ແລະ ທີມສຳຫຼວດດ້ານວິຊາການ.
- ກະກຽມວຽກງານຝຶກອົບຮົມ EOD1-2-3 ແລະ ຝຶກອົບຮົມຄືນ.
- ຄກລ ກຳລັງທົບທວນຄືນ ມາດຕະຖານການປະຕິບັດງານ SOP ແລະ NS

**ກອງກວດກູ້ ລບຕ ມະນຸດສະທຳກອງທັບ 58**

- ຊ່ວງໄລຍະໄຕມາດ 2 ເລີ່ມວຽກປະຕິບັດງານ ແຕ່ຍັງບໍ່ທັນເຕັມອັດຕາ ມີບາງກິດຈະກຳທີ່ໄດ້ເຄື່ອນໄຫວເປັນຕົ້ນແມ່ນກວດກກູ້ ພື້ນທີ່ກະສິກຳໃຫ້ເມືອງໄຊສົມບູນ ທຶນສະໜັບສະໜູນຈາກລັດຖະບານ, ວຽກງານທຳລາຍສຸກເສີນ: ເມືອງລ້ອງຊານ ແຂວງໄຊສົມບູນ, ເມືອງຄຳເກີດ ແຂວງບໍລິຄຳໄຊ, ເມືອງກາສີ ແຂວງວຽງຈັນ, ກິດຈະກຳກວດກູ້

ໃຊ້ເງິນຄອຍກາບໍ່ທັນຕອບສະໜອງທັນເວລາ ເຮັດໃຫ້ທີມງານບໍ່ໄດ້ເຄື່ອນໄຫວ, ອຸປະກອນສ່ວນຫຼາຍເກົ່າແກ່ບໍ່ມີອັນທົດແທນສຳລັບ 7 ທີມ ເກົ່າ ຍ້ອນບໍ່ໄດ້ຂຶ້ນແຜນຊື້ທົດແທນ. ສປຊ ແນະນຳວ່າ: ຖ້າອຸປະກອນເກົ່າໂຕໃດໃຊ້ບໍ່ໄດ້ແທ້ ສາມາດຢືມເອົາອຸປະກອນໃໝ່ທີ່ຊື້ໃຫ້ 13 ທີມໃໝ່ ໄປໃຊ້ກ່ອນ ເພື່ອບໍ່ໃຫ້ທີມງານຢຸດວຽກ, ສ່ວນອຸປະກອນທົດແທນ ທາງຢູເອັນກຳລັງພິຈາລະນາ.ສິ່ງທ້າທາຍ ອຸປະກອນຮັບໃຊ້ພາກສະໜາມສ່ວນຫຼາຍແມ່ນໝົດອາຍຸການນຳໃຊ້, ການຕອບສະໜອງການທຳລາຍສຸກເສີນທີ່ປະຊາຊົນລາຍງານແມ່ນຍັງຊັກຊ້າ, ທີມບໍ່ທັນຕອບສະໜອງທັນເວລາເຮັດແນວໃດຈະໃຫ້ໄວຂຶ້ນ.

**ອົງການແມັກ:**

- ປະຈຸບັນອົງການແມັກມີ ທີມງານກວດກູ້ 48, ທີມງານສຳຫຼວດ 16 ທີມ ແລະ ທຳລາຍເຄື່ອນທີ່ ລບຕ 5 ນອກຈາການປະຕິບັດວຽກຕາມແຜນ ແລະ ບົດບັນທຶກຄວາມເຂົ້າໃຈໃນແຕ່ລະທີມແລ້ວ ອົງການແມັກຍັງມີສິ່ງທ້າທາຍຫຼາຍດ້ານເຊັ່ນ: ການປະຕິບັດຕາມມາດຖານແຫ່ງຊາດທີກຳນົດ ບໍ່ສາມາດປະຕິບັດໄດ້ ຍ້ອນລະດູທຳການຜະລິດ, ການຈັດບຸລິມະສິດ ບ້ານທີ່ໃກ້ຄຽງ ເພື່ອບໍ່ໃຫ້ເສຍເວລາໃນການເດີນທາງ, ສະໜາມໂຮງຮຽນປະຖົມບ້ານວັງຄົນອົງການແມັກກວດກູ້ ລບຕ ສຳເລັດແລ້ວ ທາງໂຮງຮຽນເອົາດິນໄປຖົມບ່ອນຫຼຸບ ພັດມີບົມບີ້ຫຼົງເຫຼືອໄປນຳດິນ.
- ການກວດກູ້ຂຶ້ນແຜນລະອຽດແລ້ວກັບຄະນະກຳມະການຂັ້ນເມືອງ ແລະ ແຂວງ,ບາງກິດຈະກຳຈະບໍ່ຢູ່ໃນເປົ້າໝາຍ ຕອງໄດ້ຂໍອະນຸຍາດຈາກຜູ້ໃຫ້ທຶນ ແລະ ອົງການແມັກຈະກວດໃຫ້ແຕ່ບໍ່ຕົງກັບເວລາຂອງແຂວງ ໂດຍມີຂະບວນການຕ່າງໆ, ໃນນີ້ມີແຜນສຳຮອງເພື່ອກວດກູ້ຮັບໃຊ້ແຜນພັດທະນາຂອງລັດຖະບານ. ແຜນໃນຕໍ່ ສ້າງຂີດຄວາມສາມາດໃຫ້ພະນັກງານ, ສຳເລັດການຝຶກອົບຮົມວິຊາການເກັບກູ້ ລບຕ ລະດັບ1 ແລະ 3 ຍັງມີແຜນຝຶກວິຊາການລະດັບ 2 .

**ອົງການເອັນພີເອ.**

- ແຂວງພາກໃຕ້ ໄດ້ເຊັນບົດບັນທຶກຄວາມຊົງຈຳສະບັບທີ VI ຮອດ ທ້າຍປີ 2024 ຈະສືບຕໍ່ສຳຫຼວດບ່ອນທີ່ຍັງເຫຼືອ ແລະ ເພີ່ມທີມງານກວດກາຄຸນນະພາບສະໜາມ, ວຽກກວດກູ້ ຈະສຳເລັດໃນ 2.300 ຮຕ, 78 ບ້ານ ຈະເພີ່ມທີມງານກວດກູ້ອີກ 22 ທີມ ລວມທັງໝົດ 42ທີມ ແລະ ມີກົນຈັກຕັດຫຍ້າຊ່ວຍແຂວງລະ 1 ທີມ.

ສິ່ງທ້າທາຍ:

- ບົດບັນທຶກຄວາມຊົງຈຳເຊັນຮັບຮອງໄປແລ້ວ ແຕ່ຄະນະຄຸ້ມຄອງໂຄງການພັດເອົາວຽກກວດກູ້ ໂຮງຮຽນ 16 ແຫ່ງເພີ່ມເຂົ້າອີກ ເນື້ອທີ່ ໂຮງຮຽນດັ່ງກ່າວບໍ່ມີຈຸດຫຼັກຖານລະເບີດລູກຫວ່ານ ແລະ ບໍ່ແມ່ນພື້ນທີ່ CHA ຊຶ່ງລາຍງານຜູ້ໃຫ້ທຶນໄປແລ້ວ ແຕ່ກົງກັນຂ້າມຈະກັບຄືນໄປກວດ ຜູ້ໃຫ້ທຶນຈະວ່າຈັ່ງໃດ?. ສ່ວນ ບົມໃຫ່ຍ KM 82, fuse 123 ທີ່ພົບເຫັນໃນສະໜາມກວດກູ້ຢູ່ບ້ານເສັດຄົດ, ເມືອງປາກຊ່ອງ ຍັງບໍ່ໄດ້ຮັບການແກ້ໄຂ ແລະ ຢູ່ໃກ້ເຮືອນປະຊາຊົນແລະ ເຂື່ອນກັນນ້ຳ, ບໍ່ສາມາດຕົກລົງກັບອົງການປົກຄອງທ້ອງຖິ່ນໄດ້ ເມື່ອເວລາທຳລາຍຫາກເກີດຄວາມເສຍຫາຍ ເປ່ເພ ອົງການເອັນພີເອ ບໍ່ມີປະກັນໄພຈ່າຍຄ່າເສຍຫາຍແກ່ຊັບສິນທີ່ເສຍຫາຍ ເປ່ເພ.
- ການຖອນທາດລະເບີດ ເພື່ອມາທຳລາຍ ລບຕ, ຊຶ່ງຖອນໄດ້ 2 ຄັ້ງ/ເດືອນ ບໍ່ທັນພຽງພໍກັບຄວາມຕ້ອງການຂອງວຽກງານ, ວັນເສົາ ແລະ ວັນອາທິດບໍ່ສາມາດທຳລາຍ ລບຕ ທີ່ກວດກາພົບໃນສະໜາມໄດ້ ຊຶ່ງມັນບໍ່ສອດຄ່ອງກັບມາດຖານການປະຕິບັດງານ.

**ອົງການHI.**

- ການປະຕິບັດງານປົກກະຕິແມ່ນຢູ່ ເມືອງຫົວເມືອງ ແຂວງຫົວພັນ. ປະຈຸບັນແມ່ນຂະຫຍາຍການປະຕິບັດງານໄປແຂວງຜົ້ງສາລີ, ມີ 2 ກິດຈະກຳ ສຳຫຼວດ ແລະ ທຳລາຍລະເບີດ. ບາງພື້ນທີ່ພົບເຫັນລະເບີດຝັງດິນທີ່ຜະລິດຈາກລູກປືນຄົກ ເຮັດໃຫ້ການດຳເນີນການຢຸດຊົ່ວຄາວເພື່ອດຳເນີນການເກັບກຳຂໍ້ມູນໃຫ້ຈະແຈ້ງ. ພ້ອມນັ້ນ ຍັງແຈ້ງຕໍ່ປະຊຸມວ່າ: ກ່ຽວກັບການນຳໃຊ້ປຶ້ມຄູ່ມື HI-EO Online ສາມາດເຂົ້າເຖິງ ແລະ ດາວໂຫຼດໄດ້ ແຕ່ໃຫ້ ຄຊກລ ມີຄຳເຫັນ ແລະ ແບ່ງຕົວເລກຂອງຜູ້ທີ່ຈະນຳໃຊ້ແຕ່ລະອົງການ.

**ອົງການ ຮາໂລທຣາສ໌**

- ກະກຽມເພີ່ມທີມງານກວດກູ້ ໃຫ້ເຕັມອັດຕາ 81 ທີມ, ການປະຕິບັດງານແມ່ນປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ ເລັ່ງໃສ່ບຸລິມະສິດຂອງແຕ່ລະເມືອງເອົາເຂົ້າແຜນກວດກູ້ ລວມມີແຜນພັດທະນາ ຕາມບົດບັນທຶກຄວາມ

ເຂົ້າໃຈສະບັບໃໝ່ 60-70% ນອກຈາກນັ້ນ ຈະແມ່ນແຜນສຸກເສີນ, ກໍາລັງສີທີມງານເກັບກໍາແຜນພັດທະນາຂອງບັນດາເມືອງຕ່າງໆ, ຮອດປະຈຸບັນບາງເມືອງໄດ້ຮັບແຜນແລ້ວ. ພ້ອມກັນນີ້ ອົງການຮາໂລຍັງໄດ້ເຮັດການປະເມີນບາງພື້ນທີ່ກວດກູ້ ລບຕ.

**ຫົວຂໍ້ນໍາມາປຶກສາຫາລື:**

1. **ການແບ່ງພື້ນທີ່ CHA ເຂົ້າໃນແຜນການກວດກູ້.**

**ການແບ່ງຈັກເອົາຈັກເຮັກຕາ?** (ຕາມຄວາມເປັນຈິງມາດຕະຖານແຫ່ງຊາດບໍ່ທັນກໍານົດໄວ້ ຂຶ້ນກັບການບໍລິຫານຈັດການຂອງຫົວໜ້າທີມ ຂອງແຕ່ລະອົງການ).

- ສໍາລັບໂຄງການເກັບກູ້ ລະເບີດແຫ່ງຊາດ ແບ່ງ 3 ຮຕ/ທີມ ເພື່ອໃຫ້ສໍາເລັດໃນເດືອນຕາມຄວາມສາມາດຂອງທີມງານກວດກູ້. ອີກເຫດຜົນໜຶ່ງຖ້າສະໜາມກວດ(QC) ຈະໄດ້ກວດຄືນທັງໝົດ, ຫາກສະໜາມໃຫຍ່ ກ່ານີ້ຈະໃຊ້ເວລາດົນ ເສຍງົບປະມານ ແລະ ເວລາ.
- ຄໍາເຫັນຈາກຊ່ຽວຊານໃຫ້ເບິ່ງມາດຕະຖານສາກົນ IMAS ກໍານົດແນວໃດ,
- ຄໍາເຫັນສໍາລັບ ຄຊກລ: ສະເໜີໃຫ້ແບ່ງຕາມບຸລິມະສິດ ແລະ ຄວາມຕ້ອງການນໍາໃຊ້ທີ່ດິນ ໄປກ່ອນ.

2. **ການນໍາໃຊ້ພື້ນທີ່ສໍາຫຼວດດ້ານວິຊາການທີ່ກໍານົດຂອບເຂດສີຂຽວເພື່ອສາມາດນໍາໃຊ້ໄດ້ຢ່າງປອດໄພ ເພາະວ່າພື້ນທີ່ດັ່ງກ່າວໄດ້ນໍາໃຊ້ ເຄື່ອງກວດ ເພື່ອຊອກຫາ ລບຕ 50 % ຂຶ້ນໄປ ແຕ່ບໍ່ພົບ ລບຕ ຊຶ່ງພື້ນທີ່ດັ່ງກ່າວ ມີຈໍານວນຫຼວງຫຼາຍຫຼາຍໃນຖານຂໍ້ມູນ ທີ່ບໍ່ສາມາດມອບ- ຮັບ ໃຫ້ນໍາໃຊ້ໄດ້ຢ່າງເປັນທາງການໄດ້.**

- ການສົນທະນາປຶກສາຫາລືກັນໃນນາມວິຊາການທີ່ມີປະສົບການດ້ານການສໍາຫຼວດCMRS, CMRS,TS ຫຼາຍພາກສ່ວນມີຄໍາເຫັນແຕກຕ່າງກັນ.
- ການກວດກູ້ ມະນຸດສະທໍາກວດກແຕ່ບ່ອນທີ່ມີລະເບີດຕົກຄ້າງ, ຍົກເວັ້ນແຕ່ບໍລິສັດ ສາມາດກວດກໄດ້.
- ຖ້າໃສ່ຄໍາສັລປົດປ່ອຍທີ່ດິນ ແມ່ນຈະປົດປ່ອຍຈາກຫັຍງ?ຍັງບໍ່ມີຂໍ້ມູນ.
- ການນໍາໃຊ້ດິນດັ່ງກ່າວຈະປອດໄພບໍ? ກວດພຽງ 50% ໃຜຈະຮັບຜິດຊອບ(liability)
- ກວດກູ້ຈາກພື້ນທີ່ CHA ຖ້າພົບລະເບີດລູກຫ່ວານ ຈະຂະຫຍາຍພື້ນທີ່ອອກໄປ.
- ພື້ນທີ່ດັ່ງກ່າວເວລາສໍາຫຼວດບໍ່ໄດ້ຖ້າງປ່າ ບໍ່ສມາດກວດລະອຽດໄດ້ ລບຕ ອາດຫຼົງເຫຼືອຈາກການສໍາຫຼວດ
- ບາງອົງການປະຕິບັດງານສໍາເລັດການສໍາຫຼວດພື້ນທີເປັນສີຂຽວຍຕໍ່ມາຍັງພົບ ລບຕ ຈໍານວນຫຼວງຫຼາຍ.
- ບາງຄໍາເຫັນສາມາດມອບ-ຮັບທີ່ດິນສີຂຽວໄດ້ພາຍຫຼັງການສໍາຫຼວດດ້ານວິຊາການ ແຕ່ຕ້ອງໄດ້ເຮັດການທົດສອບ ແລະ ຂະຫຍາຍເວລາອອກໄປ.
- ພື້ນທີ່ສີຂຽວສາມາດເປັນຂໍ້ມູນໃນການກວດກູ້ພື້ນທີ່ Non CHA ໃນອະນາຄົດ ພ້ອມກັນພັດທະນາລະບຽບການຂຶ້ນມາ ແລະ ສາມາດ ປົດປ່ອຍ ແລະ ມອບຮັບດິນທີ່ປອດໄພ ຈາກ ລບຕ ເພື່ອນໍາໃນອະນາຄົດ.

**IV.ສະຫຼຸບ:**

- ຄວາມເລິກຂອງການກວດກູ້ພື້ນທີ່ກະສິກໍາໄດ້ກໍານົດໃນມາດຕະຖານແຫ່ງຊາດ 25 ຊມ, ແຕ່ສະໜາມດັ່ງກ່າວມີຂວຍຂີ້ກະເດືອນສູງ 30-40 ຊມ,ມີຂອນໄມ້ໃຫຍ່ເປັນ, ໂພນປວກ, ຮ່ອງນໍ້າໄຫຼ 2 ລະດູ ຊຶ່ງເປັນສິ່ງກີດຂວາງ ເຄື່ອງກວດບໍ່ສາມາດຈັບສັນຍານໄດ້. ຕໍ່ກັບບັນຫາດັ່ງກ່າວໃຫ້ໄປປຶກສາກັບຊ່ຽວຊານ ແລະ ວິຊາການຂອງອົງການ, ຄວາມເປັນຈິງແລ້ວສິ່ງກີດຂວາງເຫຼົ່ານີ້ ແມ່ນຂຶ້ນກັບການຕັດສິນໃຈຂອງຫົວໜ້າທີມ.
- ການປັກຫຼັກໝາຍສະໜາມກວດກູ້ ສໍາເລັດແມ່ນໄດ້ກໍານົດໃນມາດຕະຖານແຫ່ງຊາດ ແລະ ມາດຕະຖານການປະຕິບັດງານຂອງແຕ່ລະອົງການ ໃຫ້ກັບໄປທົບທວນຄືນ, ຖ້າຫາກບໍ່ທັນສອດຄ່ອງກັບຄວາມເປັນຈິງໃຫ້ປັບປຸງ ແລ້ວລາຍງານໃຫ້ ຄຊກລ.
- ຕົວເລກພື້ນທີ່ກວດກູ້ ຕົວຈິງບໍ່ຖືກກັບຕົວເລກລາຍງານໃນ IMSMA, ແນ່ນອນການວັດແທກມີການຜິດດ່ຽງກັນເລກນ້ອຍ ອາດຈະບໍ່ເປັນຜົນກະທົບຕໍ່ການລາຍງານ.

- ການປັບປຸງຕົວເລກການປະຕິບັດງານຂອງ ຄກລ ຕ້ອງໄດ້ລາຍງານແລະເຫດຜົນໃຫ້ແກ່ຜູ້ໃຫ້ທຶນ ແລະ ຄຊກລ ຊາບ.

- ການນຳເອົາດິນມາຖົມເຂດພື້ນທີ່ໂຮງຮຽນປະຖົມບ້ານວັງຄືນ ເມືອງບົວລະພາ ຜ່ານມາເຄີຍກວດກູ້ ລບຕ ສຳເລັດ ແຕ່ເມື່ອເອົາດິນມາຖົມມີລະເບີດລູກຫ່ວານປົນເປມາກັບດິນ,ຂໍ້ແນະນຳ ຄວນຮູ້ທີ່ມາຂອງດິນວ່າຈະບໍ່ມີ ລບຕ ຫຼືງ ເຫຼືອມານຳ.

- ການກວດກູ້ພື້ນທີ່ພັດທະນາບໍ່ຖືກກັບເງື່ອນໄຂຂອງຜູ້ໃຫ້ທຶນ ຊຶ່ງບໍ່ແມ່ນ CHA ຕໍ່ກັບບັນຫາດັ່ງກ່າວຕາງໜ້າຜູ້ ໃຫ້ທຶນ ສ. ອາເມລິກາ ຕ້ອງມີເອກະສານປະກອບຄົບຖ້ວນກໍ່ສາມາດແກ້ໄຂໄດ້.

- ການຂໍກວດກູ້ພື້ນທີ່ພັດທະນາຂອງ World bank, ADB ໃນແຕ່ລະໂຄງການອາດມເງິນສະໜັບສະໜູນ ວຽກ ງານເກັບກູ້ ຢ່າງໜ້ອຍ +5% ຂອງມູນຄ່າໂຄງການ ໄດ້ແຈ້ງຢູ່ໃນ ຄຳສັ່ງເລກທີ 39/ນຍ.

- ການນຳໃຊ້ພື້ນທີ່ສຳຫຼວດດ້ານວິຊາການທີ່ກຳນົດຂອບເຂດສີຂຽວເພື່ອສາມາດນຳໃຊ້ໄດ້ຢ່າງປອດໄພ ຍັງບໍ່ທັນມີ ຄວາມເປັນເອກະພາບຈະເດີນໜ້າໃນການພັດທະນາວິທີການ ແລະ ມາດຕະຖານ ເພື່ອຮອງຮັບໃນການນຳໃຊ້ດິນ ດັ່ງກ່າວຢ່າງປອດໄພ . ສຳລັບຫົວຂໍ້ນີ້ຕ້ອງໄດ້ນຳໄປປຶກສາຫາລືກັນອີກໃນລະດັບວິຊາການ.

- ສຳລັບກອງປະຊຸມຄັ້ງຕໍ່ໄປໃຫ້ຮີບຮ້ອນສົ່ງແຜນວຽກປະຕິບັດງານປະຈຳປີ 2024 ໃຫ້ ຄຊກລ ເພື່ອຈະໄດ້ສັງລວມ ຕົວເລກເພື່ອສົມທຽບ ແຜນຕົວເລກ 10.000 ຮຕ ແລະ ສະດວກໃນການຕິດຕາມແຜນດັ່ງກ່າວ.

ກອງປະຊຸມໄດ້ປິດລົງໃນເວລາ 16:00 ໂມງ ຂອງວັນທີ 26 ມິຖຸນາ 2023.

ຫົວໜ້າຫ້ອງການຄຊກລ

ບຸນເພັງ ສີສະຫວັດ

ໜ່ວຍງານຄຸ້ມຄອງສຳຫຼວດ ແລະ ເກັບກູ້ ລບຕ